ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------------------------------

ກະຊວງໂຍທາທິການ ແລະ ຂົນສົ່ງ ເລກທີ: 7369 /ຍທຂ
ນະຄອນຫລວງວຽງຈັນ, ວັນທີ: 18/5/011

# ຂໍ້ຕົກລົງ

## ວ່າດ້ວຍ ການຄຸ້ມຄອງ, ການນຳໃຊ້ ແລະ ການພັດທະນາ ລະບົບເຕັກໂນໂລຊີຂໍ້ມູນ, ຂ່າວສານ ແລະການສື່ສານຂອງຂະແໜງ ໂຍທາທິການ ແລະຂົນສົ່ງ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 373/ນຍ, ລົງວັນທີ 22 ຕຸລາ 2007 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງ ກະຊວງໂຍທາທິການ ແລະຂົນສົ່ງ;
- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະເຄື່ອນໄຫວ ຂອງຄະນະກຳມະການປະສານງານ ວຽກງານໄອຊີທີ ຂອງຂະແໜງ ຍທຂ, ສະບັບເລກທີ່ 0801/ຍທຂ, ລົງວັນທີ22/1/2009;
- ອີງຕາມການປະຊຸມປຶກສາຫາລື ເປັນເອກະພາບຂອງກອງປະຊຸມຄະນະກຳມະການປະສານງານວຽກງານໄອຊີທີ ຂອງກະຊວງ ຍທຂ, ຄັ້ງວັນທີ 20/4/2011.

## ລັດຖະມົນຕີວ່າການ ຕົກລົງ:

## ໝວດທີ I

## ບົດບັນຍັດທົ່ວໄປ

ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ວາງອອກເພື່ອກຳນົດລະບຽບການ, ຫລັກການກ່ຽວກັບການຄຸ້ມຄອງ, ການນຳໃຊ້ ແລະການພັດທະນາລະບົບ ໄອຊີທີ ຂອງຂະແໜງ ຍທຂ ໃຫ້ລວມສູນ, ເປັນເອກະພາບ, ມີຄວາມກ້າວໜ້າ ແລະຂະຫຍາຍຕົວ ແນໃສ່ເຮັດໃຫ້ການນຳໃຊ້ ແລະການບໍລິການ ບັນລຸໄດ້ສອງເປົ້າໝາຍຍຸດທະສາດຄື: ການຄຸ້ມຄອງ-ບໍລິຫານລັດ ແລະການບໍລິການສັງຄົມ ໂດຍໃຫ້ສອດຄ່ອງກັບແຜນຍຸດທະສາດ ໃນການພັດທະນາລະບົບ ໄອຊີທີ ຂອງຂະແໜງ ໂຍທາທິການ ແລະຂົນສົ່ງ.

ມາດຕາ 2. <u>ການອະທິບາຍຄຳສັບ</u>

ບັນດາຄຳສັບດັ່ງຕໍ່ໄປນີ້ ມີຄວາມໝາຍດັ່ງນີ້:

1. ລະບົບເຕັກໂນໂລຊີຂໍ້ມູນ, ຂ່າວສານ ແລະການສື່ສານ ໝາຍເຖິງ ລະບົບເຕັກໂນໂລຊີການສື່ສານຂໍ້ມູນຜ່ານລະບົບເຄືອຂ່າຍຊຶ່ງລວມມີຮູບພາບ, ສຽງ ແລະເນື້ອໃນເອກະສານ, ພາສາອັງກິດຊຽນວ່າ Information and Communication Technology System, ຊຽນຫຍໍ້ລະບົບ ICT( ລະບົບ ໄອຊີທີ );
2. ເຄືອຂ່າຍແມ່ນການເອົາພາສາອັງກິດສອງຄຳມາລວມເຂົ້າກັນຄື ຕາໜ່າງ ກັບ ວຽກງານ ພາສາອັງກິດຊຽນວ່າ Network;
3. ລະບົບໂຄງລ່າງເຄືອຂ່າຍການສື່ສານ ໝາຍເຖິງ ລະບົບທີ່ເປັນພື້ນຖານໃນການຕິດຕໍ່ສື່ສານ, ລວມທັງເຄືອຂ່າຍແບບມີສາຍ ແລະແບບບໍ່ມີສາຍ. ພາສາອັງກິດຊຽນວ່າ Network Infrastructure system;
4. ການຊ່ວຍເຫລືອທາງດ້ານເຕັກນິກ ໝາຍເຖິງ ການໃຫ້ຄວາມຊ່ວຍເຫລືອຜູ້ນຳໃຊ້ລະບົບ ໄອຊີທີ ທັງທາງດ້ານເຕັກນິກ ແລະການນຳໃຊ້. ພາສາອັງກິດຊຽນວ່າ Technical users supports;
5. ໂປຼແກຼມ ໝາຍເຖິງ ການປະຕິບັດວຽກງານເປັນລະບົບຕາມຂັ້ນຕອນ ໃນນັ້ນລວມມີ ໂປຼແກຼມ ການປະຕິບັດການຂອງຄອມພິວເຕີ ແລະໂປຼແກຼມການນຳໃຊ້. ພາສາອັງກິດ ຊຽນວ່າ Program;
6. ຊອຟແວ ແມ່ນມີຄວາມໝາຍອັນດຽວກັບຄຳວ່າໂປຼແກຼມດັ່ງກ່າວຂ້າງເທິງ. ພາສາອັງກິດ ຊຽນວ່າ Software;
7. ໄວຣັດ ໝາຍເຖິງໂປຼແກຼມຊະນິດໜຶ່ງທີ່ຜູ້ໃຊ້ຄອມພິວເຕີທັງຫລາຍບໍ່ເພິ່ງປາດຖະໜາ, ໂປຼແກຼມດັ່ງກ່າວຈະຂັດກັບໂປຼແກຼມການນຳໃຊ້ ແລະໂປຼແກຼມການປະຕິບັດການຂອງ ຄອມພິວເຕີ. ພາສາອັງກິດຊຽນວ່າ Virus;
8. ເຊີເວີ ໝາຍເຖິງໜ່ວຍຄອມພິວເຕີແມ່ ທີ່ສາມາດໃຫ້ບໍລິການ ຫຼືສາມາດອຳນວຍຄວາມສະດວກໃຫ້ ກັບຄອມພິວເຕີ ໜ່ວຍອື່ນໆ ພາສາອັງກິດຊຽນວ່າ Server;
9. ຟາຍເຊີເວີໝາຍເຖິງເຄື່ອງຄອມພິວເຕີແມ່ ເຮັດໜ້າທີ່ເປັນບ່ອນຮັບສົ່ງເອກະສານພາຍໃນ ແລະທັງເປັນບ່ອນເກັບຮັກສາ ເອກະສານຂອງບຸກຄົນຫລືຂອງກຸ່ມຄົນ ໄວ້ເປັນຄວາມລັບ. ພາສາອັງກິດຊຽນວ່າ File server;
10. ເມກາໄບ ໝາຍເຖິງ ຫົວໜ່ວຍຄວາມບັນຈຸຂອງໜ່ວຍຄວາມຈຳ. ພາສາອັງກິດຊຽນວ່າ Megabyte (Mb);
11. ອິນເຕີເນັດໝາຍເຖິງ ເຄືອຂ່າຍທີ່ເຊື່ອມໂຍງເຖິງກັນໃນທົ່ວໂລກ. ພາສາອັງກິດຊຽນວ່າ Internet;

12. ອິນຕຣາເນັດ ໝາຍເຖິງເຄືອຂ່າຍທີ່ເຊື່ອມຕໍ່ກັນຢູ່ພາຍໃນຕຶກ ຫລືອາຄານທີ່ໃກ້ກັນ ຊຶ່ງບໍ່ໄດ້ຕໍ່ຜ່ານ ເຄືອຂ່າຍຂອງບໍລິສັດໂທລະຄົມໃດໜຶ່ງ. ພາສາອັງກິດ ຂຽນວ່າ Intranet;
13. ອີແມວ ໝາຍເຖິງຈົດໝາຍເອເລັກໂຕນິກ ທີ່ສົ່ງຜ່ານທາງລະບົບອິນເຕີເນັດ. ພາສາອັງກິດຂຽນວ່າ Electronic mail ( E-mail );
14. Surname+Name@mpwt.gov.la ໝາຍເຖິງ ທີ່ຢູ່ອີແມວທີ່ເປັນທາງການ ຂອງຂະແໜງ ຍທຂ, ປະກອບມີ ອັກສອນຕົວທຳອິດຂອງນາມສະກຸນແລະຊື່ແທ້ຂອງຕົນ;

Name ໝາຍເຖິງ ຊື່ສະເພາະ ຂອງພະນັກງານ ໃນຂະແໜງ ຍທຂ ຜູ້ໃດຜູ້ໜຶ່ງ;

mpwt ໝາຍເຖິງຊື່ຫຍໍ້ພາສາອັງກິດສະເພາະຂອງກະຊວງ ຍທຂ. ພາສາອັງກິດຕົວເຕັມຂຽນວ່າ Ministry of Public Works and Transports;

gov ໝາຍເຖິງອົງການຈັດຕັ້ງຂອງລັດຖະບານທີ່ຂຽນຫຍໍ້ຕາມພາສາອັງກິດ. ພາສາອັງກິດຂຽນ ເຕັມວ່າ government;

La ໝາຍເຖິງຊື່ປະເທດລາວ ທີ່ຂຽນຫຍໍ້ຕາມພາສາອັງກິດ. ພາສາອັງກິດຂຽນ ເຕັມວ່າ Laos;

"@" ແລະ"." ແມ່ນລະຫັດຂອງການສື່ສານທີ່ບອກໃຫ້ຮູ້ເຖິງທີ່ຢູ່ ສູງສຸດ ແລະຍ່ອຍ ຂອງອີແມວ;

15. ດາວໂຫລດ ໝາຍເຖິງການດຶງເອົາຂໍ້ມູນຈາກ ໜ່ວຍຄອມພີວເຕີແມ່ ຜ່ານລະບົບ ອິນເຕີເນັດ ມາຫາໜ່ວຍຄອມເພີເຕີຂອງຜູ້ໃຊ້ ພາສາອັງກິດຂຽນວ່າ download;
16. ອັບໂຫລດໝາຍເຖິງການສົ່ງຂໍ້ມູນຕ່າງໆຈາກໜ່ວຍຄອມພີວເຕີຂອງຜູ້ໃຊ້ໄປຫາຄອມພີວເຕີໜ່ວຍແມ່ ພາສາອັງກິດຂຽນວ່າ uploard.

ມາດຕາ 3. <u>ຂອບເຂດການນຳໃຊ້</u>

ຂໍ້ຕົກລົງສະບັບນີ້ນຳໃຊ້ສະເພາະໃນຂະແໜງ ໂຍທາທິການ ແລະຂົນສົ່ງເທົ່ານັ້ນ.

## ໝວດທີ II
## ການຄຸ້ມຄອງກວດກາ ແລະການບໍລິການ

ມາດຕາ 4. <u>ການຄຸ້ມຄອງກວດກາລະບົບ ໄອຊີທີ</u>

ລະບົບ ໄອຊີທີ ຂອງຂະແໜງ ຍທຂ ແມ່ນລະບົບການສື່ສານຂໍ້ມູນລວມຂອງຂະແໜງ ຍທຂ. ຕ້ອງມີການຄຸ້ມຄອງຢ່າງເປັນລະບົບ ລວມສູນ, ມີການບຳລຸງຮັກສາ ແລະການຝຶກອົບຮົມ ການນຳໃຊ້ຢ່າງເປັນປົກກະຕິ ເພື່ອໃຫ້ສາມາດນຳໃຊ້ໄດ້ຍາວນານ. ຄະນະກຳມະການປະສານງານວຽກງານ ໄອຊີທີ ຂອງຂະແໜງ ຍທຂ ເປັນຜູ້ຊີ້ນຳ ແລະຕິດຕາມການຄຸ້ມຄອງ ໂດຍມອບໃຫ້ກອງເລຂາ ຫລື ພະແນກ ໄອຊີທີ ຫ້ອງການກະຊວງ ເປັນຜູ້ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດວຽກງານຕົວຈິງ.

ບັນດາກົມ, ການຈັດຕັ້ງທຽບເທົ່າກົມ ອ້ອມຂ້າງກະຊວງ, ບັນດາພະແນກ ຍທຂ ແຂວງ ແລະນະຄອນຫລວງເປັນຜູ້ຄຸ້ມຄອງອຸບປະກອນ ໄອຊີທີ ທີ່ເຊື່ອມຕໍ່ກັບລະບົບລວມ ຂອງກະຊວງ ຕາມການຕົກລົງອະນຸມັດຂອງກະຊວງ ຕາມການສະເໜີຂອງຄະນະກຳມະການ ປະສານງານວຽກ ງານ ໄອຊີທີ ຂອງຂະແໜງ ຍທຂ. ພະແນກ ໄອຊີທີ ຫ້ອງການກະຊວງ ເປັນຜູ້ບໍລິຫານລະບົບລວມ ຂອງກະຊວງ ທັງຂຶ້ນທະບຽນບັນຊີລວມອຸບປະກອນ ໄອຊີທີ ທັງໝົດທີ່ໄດ້ເຊື່ອມຕໍ່ກັບລະບົບ ໄອຊີ ທີ ຂອງຂະແໜງ ຍທຂ. ພ້ອມກັນນັ້ນ ບັນດາກົມ, ກອງ, ສະພາວິທະຍາສາດ, ສະຖາບັນ, ສູນຝຶກ ທີ່ຂຶ້ນກັບກະຊວງ ຍທຂ ແລະພະແນກ ຍທຂ ທ້ອງຖິ່ນສາມາດຈັດຕັ້ງໜ່ວຍງານ ຫລືຜູ້ປະສານ ງານວຽກງານ ໄອຊີທີ ຂອງຕົນທີ່ປະກອບດ້ວຍພະນັກງານທີ່ມີຄວາມຮູ້ພື້ນຖານດ້ານ ໄອຊີທີ ປະມານ 1-2 ຄົນ ເພື່ອເປັນຈຸດລວມສູນການບໍລິການ ແລະປະສານງານກັບພະແນກ ໄອຊີທີ ຫ້ອງການກະຊວງຢູ່ໃນການຈັດຕັ້ງຂອງຕົນ.

ມາດຕາ 5. <u>ການປ້ອງກັນລະບົບ</u>

ລະບົບ ໄອຊີທີ ຂອງຂະແໜງ ຍທຂ ຕ້ອງໄດ້ຮັບການປ້ອງກັນ ແລະການນຳໃຊ້ຢ່າງເປັນປົກກະຕິ ຊຶ່ງພະແນກການຂ່າວ ແລະເຕັກໂນໂລຊີການສື່ສານ, ຫ້ອງການກະຊວງ ຍທຂ ເປັນຜູ້ດຳເນີນການດັ່ງນີ້:

1. ນຳໃຊ້ລະບົບການປ້ອງກັນ ແບບລວມສູນ ແລະເປັນເອກກະພາບໃນຂະແໜງ ຍທຂ ເພື່ອປ້ອງກັນ ໄວຣັດ ແລະປ້ອງກັນການທຳລາຍ, ແຊກແຊງ ຫຼືກີດຂວາງການເຮັດວຽກຂອງລະບົບ;
2. ບໍ່ໃຫ້ຕິດຕັ້ງຄອມພີວເຕີແມ່ ຫຼືເຊີເວີໃດໆ ເພື່ອໃຫ້ບໍລິການແກ່ສາທາລະນະ ໃນລະດັບອິນເຕີເນັດໄວ້ໃນລະບົບເຄືອຂ່າຍຂອງຂະແໜງ ຍທຂໂດຍບໍ່ໄດ້ຮັບການອະນຸມັດຈາກກະຊວງ ຍທຂ;
3. ຕິດຕາມການສື່ສານຜ່ານລະບົບເຄືອຂ່າຍຂອງຂະແໜງ ຍທຂ ໂດຍນຳໃຊ້ລະບົບກັ່ນຕອງຂໍ້ມູນ, ການດາວໂຫລດເອກະສານ ແລະການເຊື່ອມຕໍ່ອິນເຕີເນັດ;
4. ຄວບຄຸມການນຳໃຊ້ອິນເຕີເນັດດ້ວຍວິທີການດັ່ງຕໍ່ໄປນີ້:
    - ຈັດເວລາຂອງການນຳໃຊ້ອິນເຕີເນັດ;
    - ຈັດໝວດຜູ້ນຳໃຊ້ຢູ່ໃນພາກສ່ວນຕ່າງໆ;
    - ກຳນົດທີ່ຕັ້ງຂອງຄອມພີວເຕີ ແລະກຳນົດຂະໜາດເນື້ອທີ່ຂອງການດາວໂຫລດ;
5. ກວດກາຂໍ້ມູນ, ຂ່າວສານ ທີ່ຈະອອກໃນເວັບໄຊ ຂອງກະຊວງ ຍທຂ ຢ່າງລະອຽດ ເພື່ອໃຫ້ຖືກຕ້ອງ ແລະສອດຄ່ອງກັບລະບຽບກົດໝາຍ ແຕ່ຮັບປະກັນຄວາມວ່ອງໄວ;
6. ຂໍ້ມູນທຸກຢ່າງທີ່ໄດ້ຈາກຜູ້ໃຊ້ ລະບົບ ໄອຊີທີຂອງກະຊວງ ຍທຂ ຈະເກັບຮັກສາໄວ້ເປັນຄວາມລັບ.

ມາດຕາ 6. <u>ການບໍລິການລະບົບ ໄອຊີທີ</u>

ລະບົບ ໄອຊີທີຂອງຂະແໜງ ຍທຂ ແມ່ນຕ້ອງຮັບປະກັນໄດ້ ການບໍລິການໃຫ້ມີຄວາມປອດໄພ,ວ່ອງໄວ, ທັນສະໄໝກ້າວໜ້າ ແລະຂະຫຍາຍຕົວພາຍໃນຂະແໜງການຂອງຕົນ. ພະແນກ ໄອຊີທີ ຕ້ອງເອົາໃຈໃສ່ໃຫ້ຄວາມຊ່ວຍເຫລືອຜູ້ໃຊ້, ສ້າງລະບົບແນະນຳການນຳໃຊ້ ແລະຝຶກອົບຮົມ

ຍົກລະດັບຜູ້ໃຊ້ ແນໃສ່ໃຫ້ພະນັກງານທຸກຄົນໃນຂະແໜງ ຍທຂ ສາມາດນຳໃຊ້ຄອມພິວເຕີ ຫລືລະບົບ ໄອຊີທີ ເຂົ້າໃນວຽກງານຂອງຕົນໄດ້ຢ່າງມີປະສິດທິພາບ. ນອກນີ້ ຍັງໃຫ້ບໍລິການດ້ານຂໍ້ມູນ, ຂ່າວສານ ແກ່ອົງການຈັດຕັ້ງລັດ ແລະເອກະຊົນ ທີ່ຕ້ອງການຂໍ້ມູນ ຂອງຂະແໜງ ຍທຂ ເພື່ອນຳໃຊ້ໃຫ້ເກີດປະໂຫຍດແກ່ການພັດທະນາດ້ານຕ່າງໆ ຕາມການຕົກລົງຂອງ ຄະນະກຳມະການ ປະສານງານວຽກງານ ໄອຊີທີ.

ພະແນກ ໄອຊີທີ, ຫ້ອງການກະຊວງຕ້ອງໃຫ້ຄວາມຊ່ວຍເຫຼືອອັນທີ່ຈຳເປັນໃຫ້ແກ່ຜູ້ນຳໃຊ້ລະບົບ ໄອຊີທີ ຂອງຂະແໜງ ຍທຂ ດັ່ງນີ້:

1. ຕ້ອງເອົາໃຈໃສ່ຄົ້ນຄ້ວາວິທີການແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນແກ່ຜູ້ນຳໃຊ້ລະບົບ ໄອຊີທີ ຂອງຂະແໜງ ຍທຂ ຢ່າງເຕັມຄວາມສາມາດ;
2. ການໃຫ້ບໍລິການ ຫຼືການໃຫ້ຄວາມຊ່ວຍແຕ່ລະຄັ້ງ ຕ້ອງບັນທຶກບັນຫາ ແລະແບບວິທີແກ້ໄຂບັນຫາໄວ້ໃນລະບົບ ເພື່ອເປັນບ່ອນອີງ ແລະຕິດຕາມວິທີການແກ້ໄຂບັນຫາໃນຄັ້ງຕໍ່ໆໄປ;
3. ບັນດາຜູ້ປະສານງານວຽກງານ ໄອຊີທີ ຢູ່ແຕ່ລະກົມ, ການຈັດຕັ້ງທຽບເທົ່າກົມ, ພະແນກ ຍທຂ ແຂວງ ແລະນະຄອນຫລວງຕ້ອງເອົາໃຈໃສ່ ແລະຖືວ່າວຽກງານນີ້ກໍ່ແມ່ນວຽກທີ່ສຳຄັນອັນໜຶ່ງຂອງຕົນ ເພື່ອພ້ອມກັນເຮັດຫລ້ອນໜ້າທີ່;
4. ກໍລະນີທາກມີຄວາມຈຳເປັນ ວ່າຈ້າງບຸກຄົນ ຫຼືບໍລິສັດພາຍນອກມາໃຊ້ບໍລິການດ້ານ ໄອຊີທີ ການຈັດຕັ້ງກ່ຽວຂ້ອງຕ້ອງມອບໃຫ້ຜູ້ປະສານງານ ໄອທີ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕິດຕາມນຳຢ່າງໃກ້ຊິດ ເພື່ອຮັບປະກັນຄວາມຖືກຕ້ອງ;
5. ການນຳໃຊ້ອຸບປະກອນ ຫລືໂປຼແກຼມ ທີ່ມີຄວາມແຕກຕ່າງກັນ ອາດມີບັນຫາໃນການນຳໃຊ້ຢູ່ໃນລະບົບ ໄອຊີທີ ຂອງຂະແໜງ ຍທຂ, ແຕ່ພະແນກ ໄອຊີທີ ຕອ້ງເອົາໃຈໃສ່ໃຫ້ຄວາມຊ່ວຍເຫລືອ ຢ່າງດີທີ່ສຸດເທົ່າທີ່ຈະເຮັດໄດ້;
6. ບຸກຄົນໃດທາກນຳເອົາອຸບປະກອນ ສ່ວນຕົວມານຳໃຊ້ກັບລະບົບ ໄອຊີທີ ຂອງຂະແໜງ ຍທຂ ຕ້ອງແຈ້ງໃຫ້ຜູ້ປະສານງານວຽກງານ ໄອຊີທີ ຢູ່ໃນກົມກອງຂອງຕົນ ຫລືແຈ້ງໃຫ້ພະແນກ ໄອຊີທີ ຊາບ, ແຕ່ຖືວ່າເຄື່ອງດັ່ງກ່າວແມ່ນບໍ່ໄດ້ຢູ່ໃນຄວາມຮັບຜິດຊອບລວມ ຂອງຂະແໜງ ຍທຂ ຖ້າມີການສ້ອມແປງ ຫລືບຳລຸງຮັກສາກໍຕ້ອງໄດ້ຈ່າຍຄ່າສ້ອມແປງເອົາເອງ.

## ໝວດທີ III
## ການນຳໃຊ້ ແລະຂໍ້ຫ້າມ

### ມາດຕາ 7. <u>ການນຳໃຊ້ອິນເຕີເນັດ</u>

ການນຳໃຊ້ອິນເຕີເນັດ ຕ້ອງປະຕິບັດຕາມລະບຽບການດັ່ງນີ້:

1. ຄວນໃຊ້ອິນເຕີເນັດເພື່ອການຄົ້ນຄ້ວາຮ່ຳຮຽນ ແລະການປະຕິບັດວຽກງານເທົ່ານັ້ນ;

ມາດຕາ 8. <u>ການນຳໃຊ້ອີແມວແລະ ອິນຕຣາແນັດ</u>

ການນຳໃຊ້ອີແມວ ແລະອິນຕຣາເນັດຕ້ອງປະຕິບັດຕາມລະບຽບການດັ່ງນີ້:

1. ພະນັກງານ ຍທຂ ທຸກຄົນມີສິດເທົ່າທຽມກັນໃນການນຳໃຊ້ລະບົບອິນຕຣາເນັດ, ອີແມວ, ຟາຍເຊີເວີ ແລະໂປຼແກມການນຳໃຊ້ຕ່າງໆຂອງຂະແໜງ ຍທຂ ສຳລັບວຽກງານ ທາງລັດຖະການເທົ່ານັ້ນ;
2. ການຕັ້ງຊື່ ອີແມວຈະຕ້ອງປະຕິບັດຕາມມາດຕະຖານດັ່ງຕໍ່ໄປນີ້:
   ອັກສອນຕົວທຳອິດຂອງນາມສະກຸນ<ຊື່>@mpwt.gov.la
   ຕົວຢ່າງ. PKhamla@mpwt.gov.la;
3. ເນື້ອທີ່ ອີແມວແຕ່ລະຄົນ ຈະມີຂະໜາດບັນຈຸຢ່າງໜ້ອຍ 50Mb, ເອກະສານຄັດຕິດມານຳອີແມວ, ຂໍ້ມູນ ແລະ ອີແມວທີ່ໄດ້ຮັບ ແລະສົ່ງແລ້ວ ຫາກມີຄວາມຈຳເປັນຢາກເກັບມ້ຽນ ກໍ່ຕ້ອງເກັບຮັກສາ ໄວ້ຢູ່ຟາຍເຊີເວີ ຫຼືບ່ອນອື່ນຕ່າງຫາກກໍ່ໄດ້;

ມາດຕາ 9. <u>ຂໍ້ຫ້າມ</u>

1. ຫ້າມນຳໃຊ້ ອິນເຕີແນັດເພື່ອ ລົບກັນຫຼິ້ນ, ເບິ່ງຮູບເງົາ ແລະ ຟັງເພັງຜ່ານລະບົບເຄືອຄ່າຍ;
2. ຫ້າມນຳໃຊ້ອິນເຕີແນັດໄປໃນທາງທີ່ບໍ່ເໝາະສົມເຊັ່ນ: ເບິ່ງຮູບລາມົກ, ຫລິ້ນການພະນັນ, ໃສ່ຮ້າຍຜູ້ອື່ນ, ຊຸກຍູ້ການກໍ່ການຮ້າຍ, ການໃຊ້ຄວາມຮຸນແຮງ ລວມເຖິງສື່ຕ່າງໆທີ່ເຫັນວ່າຕ້ານ, ບິດເບືອນ ແລະບໍ່ສອດຄ່ອງຕໍ່ແນວທາງນະໂຍບາຍຂອງພັກ ແລະລະບຽບກົດໝາຍຂອງລັດ;
3. ຫ້າມເປີດເວບໄຊ້ຖິ້ມປະໄວ້ໂດຍພະລາການ, ຂາດຄວາມຮັບຜິດຊອບ;
4. ຫ້າມສົ່ງ ຫຼື ສົ່ງຕໍ່ອີແມວໂຄສະນາບິດເບືອນ, ໄວຣັສ ຫຼື ໂປຣແກຣມຄອມພິວເຕີອື່ນໆ.
5. ຫ້າມໃຊ້ ອີແມວຂອງກະຊວງ ສົ່ງຂໍ້ມູນເພື່ອທຳລາຍກຽດຊື່ສຽງ, ກໍ່ກວນ, ຫຼືສົ່ງເອກະສານທີ່ບໍ່ເໝາະສົມຕໍ່ບຸກຄົນ ຫຼືການຈັດຕັ້ງ ເຊິ່ງເປັນການລະເມີດສິດທິ ຂອງຜູ້ອື່ນ;

## ພາກທີ IV
## ການວາງແຜນພັດທະນາ

ມາດຕາ 10. <u>ການວາງແຜນພັດທະນາລະບົບ ໄອຊີທີ</u>

1. ຄະນະກໍາມະການປະສານງານວຽກງານ ໄອຊີທີ ຂອງຂະແໜງ ຍທຂ ເປັນຜູ້ຄົ້ນຄ້ວາສ້າງແຜນຍຸດທະສາດ ການພັດທະນາລະບົບ ໄອຊີທີ ຂອງຂະແໜງ ຍທຂ ໃຫ້ລວມສູນ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄວາມກ້າວໜ້າ, ຂະຫຍາຍຕົວ ແລະຮັບໃຊ້ ວຽກງານຂອງຂະແໜງການ ຍທຂ ຢ່າງມີປະສິດທິຜົນຢ່າງແທ້ຈິງ. ໃນນັ້ນ, ປະກອບມີການວາງແຜນພັດທະນາລະບົບເຄືອຄ່າຍ, ການວາງແຜນພັດ ທະນາຄົນ ແລະ ການວາງແຜນພັດທະນາ ໂປຼແກຼມການນໍາໃຊ້ໃຫ້ຄອບຄຸມ 2 ເປົ້າໝາຍເຊັ່ນ: ໂປຼແກຼມລວມ ແລະໂປຼແກຼມທີ່ລົງເລິກວຽກວິຊາສະເພາະຂອງບັນດາກົມອ້ອມຂ້າງກະຊວງ;
2. ພະແນກການຂ່າວ ແລະເຕັກໂນໂລຊີການສື່ສານໃນບານກອງເລຂາຄະນະກໍາມະການປະສານງານວຽກງານ ໄອຊີທີ ຂອງຂະແໜງ ຍທຂ ມີໜ້າທີ່ເປັນເສນາທິການ ໃນການຄົ້ນຄ້ວາຮ່າງ, ນໍາສະເໜີ ແລະປະສານສົມທົບ ກັບພາກສ່ວນກ່ຽວຂ້ອງ ທີ່ຂຶ້ນກັບກະຊວງ ທັງແຜນຍຸດທະສາດ ໄອຊີທີ ດັ່ງກ່າວໃຫ້ເປັນໂຄງການລະອຽດ ແລະເປັນຜູ້ຈັດຕັ້ງປະຕິບັດ ການພັດທະນາລະບົບ ໄອຊີທີ ຂອງ ຂະແໜງ ຍທຂ, ເປັນເຈົ້າການ ໃນການຄົ້ນຄ້ວາພັດທະນາໂປຼແກຼມການນໍາໃຊ້ ແລະຂະຫຍາຍລະບົບເຄືອຂ່າຍ ໄອຊີທີ ຂອງຂະ ແໜງການ ຍທຂ ໃນແຕ່ລະໄລຍະເຊັ່ນຕົວ ຢ່າງໂປຼແກຼມລວມ <u>WWW.mpwt.gov.la</u> ແມ່ນຊື່ເວບໄຊ້ຂອງກະຊວງ ຍທຂ ແລະ <u>admin@mpwt.gov.la</u> ແມ່ນຊື່ອີແມວຂອງກະຊວງ ຍທຂ, ໂປຼແກຼມສະເພາະ <u>WWW.mpwt.gov.la/AssetManagerment.php</u> ແມ່ນໂປຼແກຼມຄຸ້ມຄອງສັບສິນ;
3. ພະແນກການຂ່າວ ແລະເຕັກໂນໂລຊີການສື່ສານ ປະສານສົມທົບ ກັບພາກສ່ວນກ່ຽວຂ້ອງ ທີ່ຂຶ້ນກັບກະຊວງ ເພື່ອຝຶກອົບຮົມຍົກລະດັບຄວາມຮູ້ຄວາມສາມາດ ກ່ຽວກັບການນໍາໃຊ້ ຄອມພີວເຕີ ກໍ່ຄືການນໍາໃຊ້ລະບົບ ໄອຊີທີ, ຮັບປະກັນໃຫ້ພະນັກງານໃນຂະແໜງການ ຍທຂ ມີຄວາມສາມາດຢ່າງພຽງພໍໃນການນໍາໃຊ້ ລະບົບ ໄອຊີທີ ເຂົ້າໃນວຽກງານ;
4. ພະແນກການຂ່າວ ແລະເຕັກໂນໂລຊີການສື່ສານ ເປັນເຈົ້າການລາຍງານເພື່ອຂໍທິດຊີ້ນໍາ ຈາກຂັ້ນເທິງ ແລະຈັດຕັ້ງປະຕິບັດການເຊື່ອມຕໍ່ ຫລືຍົກເລີກການເຊື່ອມຕໍ່ລະບົບເຄືອຂ່າຍ;
5. ຄະນະກໍາມະການປະສານງານວຽກງານ ໄອຊີທີ ຕ້ອງປະຊຸມກັນເປັນປະຈໍາ ຢ່າງໜ້ອຍປີລະ 2 ເທື່ອ ເພື່ອລາຍງານຄວາມຄືບໜ້າກ່ຽວກັບການຈັດຕັ້ງປະຕິບັດວຽກງານ, ຖອດຖອນບົດຮຽນ ແລະຂໍທິດຊີ້ນໍາຈາກຂັ້ນເທິງຂອງຕົນ.

ມາດຕາ 11. <u>ການປັບປຸງວຽກງານ ໄອຊີທີ</u>

ຄະນະກຳມະການປະສານງານວຽກງານ ໄອຊີທີ ເປັນຜູ້ຄົ້ນຄ້ວາ ແລະນຳສະເໜີຕໍ່ທ່ານລັດຖະມົນຕີວ່າການ ພິຈາລະນາຕົກລົງ ກ່ຽວກັບການປັບປຸງລະບົບ ໄອຊີທີ ກໍ່ຄືການປັບປຸງອຸປະກອນອັນເກົ່າ ແລະຈັດຫາອັນໃໝ່, ການນຳໃຊ້ ຊອຟແວໃຫ້ມີມາດຕະຖານດຽວກັນໃນຂະແໜງ ຍທຂ ແລະສອດຄ່ອງກັບລະບົບບໍລິຫານລັດດ້ວຍລະບົບເອເລັກໂຕຼນິກຂອງລັດຖະບານ(e-government), ການກໍ່ສ້າງ ແລະຍົກລະດັບບຸກຄະລາກອນຢ່າງເໝາະສົມກັບສະພາບ ເສດຖະກິດ-ສັງຄົມແຕ່ລະໄລຍະ ເພື່ອໃຫ້ມີຄວາມກ້າວໜ້າທັນຕາມຍຸກສະໃໝຢູ່ສະເໝີ.

ກ. <u>ຈັດຫາອຸປະກອນໃໝ່</u>

1. ການຈັດຫາອຸປະກອນໃໝ່ເພື່ອປັບປຸງ ແລະຍົກລະດັບລະບົບ ໄອຊີທີ ຂອງຂະແໜງ ຍທຂ ສ່ວນໃຫຍ່ແມ່ນມາຈາກສອງທາງຄື ການຈັດຊື້ດ້ວຍງົບປະມານຂອງລັດ ແລະດ້ວຍການຊ່ວຍເຫຼືອລ້າ ຫຼືກູ້ຢືມຈາກບັນດາຜູ້ໃຫ້ທຶນ ໂດຍຜ່ານໂຄງການຕ່າງໆ.
2. ອຸປະກອນ ໄອຊີທີ ທີ່ໄດ້ຮັບການຈັດຊື້ ແລະໄດ້ຮັບຈາກການຊ່ວຍເຫຼືອ ແມ່ນຖືວ່າເປັນ ຊັບສິນປັດລວມຂອງຂະແໜງ ຍທຂ, ຜູ້ຄຸ້ມຄອງ ແລະນຳໃຊ້ ຕ້ອງແຈ້ງບັນຊີ ລະອຽດໃຫ້ພະແນກການຂ່າວ ແລະເຕັກໂນໂລຊີການສື່ສານ ເພື່ອເອົາເຂົ້າບັນຊີລວມຂອງກະຊວງ.

ຂ. ຂັ້ນຕອນໃນການຈັດຫາອຸປະກອນໃໝ່

ບັນດາກົມ, ການຈັດຕັ້ງທຽບເທົ່າກົມ, ພະແນກ ຍທຂ ປະຈຳແຂວງ ແລະນະຄອນຫລວງ ທີ່ມີແຜນການປັບປຸງ ຫຼືຈັດຫາອຸປະກອນໃໝ່ ຕ້ອງປະຕິບັດຕາມຂັ້ນຕອນດັ່ງນີ້:

1. ສະເໜີແຜນປັບປຸງ ຫຼືແຜນຈັດຫາອຸປະກອນໃໝ່ຕໍ່ຄະນະກຳມະການປະສານງານວຽກງານ ໄອຊີທີ ເພື່ອພິຈາລະນາຮັບຮອງທາງດ້ານປະເພດ, ຊະນິດ ແລະມາດຕະຖານເຕັກນິກຂອງອຸປະກອນ ແລະລະບົບການປະຕິບັດການທັງໝົດ;
2. ການຈັດຊື້ຕ້ອງປະຕິບັດຕາມລະບຽບການຈັດຊື້ຂອງລັດຖະບານ ແລະໃຫ້ສອດຄ່ອງກັບລະບຽບການຂອງຂະແໜງ ຍທຂ.

ມາດຕາ 12. <u>ການຈັດຫາທຶນ</u>

ຄະນະກຳມະການປະສານງານວຽກງານ ໄອຊີທີ ເປັນຜູ້ຄົ້ນຄ້ວາຈັດສັນງົບປະມານ ແລະຍາດແຍ່ງທຶນຊ່ວຍເຫຼືອ ທັງຢູ່ພາຍໃນ ແລະຕ່າງປະເທດ ເພື່ອປັບປຸງລະບົບ ໄອຊີທີ ລວມທັງການກໍ່ສ້າງ, ການຍົກລະດັບບຸກຄະລາກອນ ທັງໄລຍະສັ້ນ ແລະໄລຍະຍາວ ໃຫ້ມີຄວາມຮູ້ ແລະຄວາມສາມາດ ທີ່ເໝາະສົມໃນການຄຸ້ມຄອງ ແລະນຳໃຊ້ລະບົບ ໄອຊີທີ ຂອງຂະແໜງ ຍທຂ.

ມາດຕາ 13. <u>ນະໂຍບາຍກ່ຽວກັບການພັດທະນາລະບົບ ໄອຊີທີ</u>

ກະຊວງ ຍທຂ ໂດຍແມ່ນ ຄະນະກຳມະການປະສານງານວຽກງານ ໄອຊີທີ ເປັນຜູ້ວາງນະໂຍບາຍ ການຈັດຕັ້ງປະຕິບັດ ການພັດທະນາລະບົບ ໄອຊີທີຂອງຂະແໜງ ຍທຂ ດັ່ງນີ້:

1. ການພັດທະນາລະບົບໄອຊີທີ ຕ້ອງສອດຄ່ອງກັບແຜນຍຸດທະສາດການພັດທະນາລະບົບ ໄອຊີທີ ຂອງຂະແໜງ ຍທຂ ແລະແຜນຍຸດທະສາດດ້ານ ໄອຊີທີ ຂອງລັດຖະບານ ເພື່ອຄຸ້ມຄອງ-ບໍລິຫານລັດ ແລະການບໍລິການປະຊາຊົນໃຫ້ກ້ວາງຂວາງ;
2. ການພັດທະນາລະບົບ ໄອຊີທີ ຂອງຂະແໜງ ຍທຂ ຕ້ອງຮັບປະກັນໃຫ້ມີຄວາມກ້າວໜ້າ, ມີຄວາມເປັນເອກະພາບ, ລວມສູນ, ມີຄວາມຍືນຍົງ, ເພິ່ງຕົນເອງກຸ້ມຕົນເອງໄດ້;
3. ເປີດກ້ວາງການຮ່ວມມືເພື່ອພັດທະນາຈາກພາກສ່ວນເອກະຊົນ, ອົງການຈັດຕັ້ງສາກົນຕ່າງໆ ທັງພາຍໃນ ແລະຕ່າງປະເທດ ໂດຍສອດຄ່ອງກັບລະບຽບການລົງທຶນຂອງລັດ.

## ໝວດທີ V
## ນະໂຍບາຍຕໍ່ຜູ້ມີຜົນງານ, ມາດຕະການຕໍ່ຜູ້ລະເມີດ

ຄະນະກຳມະການປະສານງານ ວຽກງານ ໄອຊີທີ ເປັນຜູ້ຄົ້ນຄ້ວາວາງນະໂຍບາຍຕໍ່ຜູ້ປະພຶດ ແລະ ປະຕິບັດດີ ແລະວາງມາດຕະການຕໍ່ຜູ້ລະເມີດ ກ່ຽວກັບການຄຸ້ມຄອງ, ການນຳໃຊ້ ແລະ ການພັດທະນາ ລະບົບ ໄອຊີທີ ເພື່ອສະເໜີກະຊວງ ຍທຂ ເປັນຜູ້ຕົກລົງດັ່ງນີ້:

ມາດຕາ14. <u>ນະໂຍບາຍຕໍ່ຜູ້ມີຜົນງານ</u>

1. ການປະພຶດ, ປະຕິບັດດີ ກ່ຽວກັບ ການຄຸ້ມຄອງ, ການນຳໃຊ້ ແລະການພັດທະນາລະບົບ ໄອຊີທີ ຖືເປັນເງື່ອນໄຂໜຶ່ງໃນການຄັດເລືອກຜົນງານຂອງພະນັກງານປະຈຳປີ ໃນຂະແໜງ ຍທຂ;
2. ຄົ້ນຄ້ວາ ແລະສະເໜີການຍ້ອງຍໍຕໍ່ບຸກຄົນ ຫຼືຕໍ່ນິຕິບຸກຄົນທີ່ເອົາໃຈໃສ່ປະກອບສ່ວນປົກປັກຮັກສາ, ພັດທະນາ ລະບົບ ໄອຊີທີ ຂອງຂະແໜງ ຍທຂ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ສາມາດນຳໃຊ້ໄດ້ຍາວນານ, ມີປະສິດທິພາບ ດ້ວຍຄວາມຮັບຜິດຊອບສູງ;
3. ຄົ້ນຄ້ວາ ແລະສະເໜີການຍ້ອງຍໍຕໍ່ບຸກຄົນ ຫຼືຕໍ່ນິຕິບຸກຄົນທີ່ນຳໃຊ້ລະບົບໄອຊີທີ ເຂົ້າໃນການພົວພັນວຽກງານ ໂດຍສອດຄ່ອງກັບລະບຽບການທີ່ວາງອອກ ແລະເກີດຜົນປະໂຫຍດຕໍ່ສວນລວມ;
4. ຄົ້ນຄ້ວາ ແລະສະເໜີການຍ້ອງຍໍຕໍ່ບຸກຄົນ ຫຼືຕໍ່ນິຕິບຸກຄົນທີ່ມີຜົນງານດີໃນການປະສານງານ ຊຶ່ງເຮັດໃຫ້ຂອດປະສານງານມີຄວາມສະດວກ, ວ່ອງໄວ ແລະມີປະສິດທິພາບຕາມເງື່ອນໄຂ ໃນແຕ່ລະໄລຍະ.

ມາດຕາ15. <u>ມາດຕະການຕໍ່ຜູ້ລະເມີດ</u>

1. ຫາກບຸກຄົນ ຫລືນິຕິບຸກຄົນໃດເຈດຕະນາ ຫລືກະທຳສິ່ງໃດຕໍ່ລະບົບ ໄອຊີທີ ໂດຍຂາດຄວາມຮັບພິດຊອບ ອັນໄດ້ກໍ່ໃຫ້ເກີດຄວາມເສັຍຫາຍຕໍ່ຊັບສິນ ແລະຜົນປະໂຫຍດລວມຂອງຂະແໜງ ຍທຂ, ບຸກຄົນ ຫລືນິຕິບຸກຄົນນັ້ນ ຕ້ອງຮັບຜິດຊອບສ້ອມແປງ ຫຼືທົດແທນຄືນຕໍ່ຜົນເສັຍຫາຍດັ່ງກ່າວ;
2. ຫາກບຸກຄົນ ຫລືນິຕິບຸກຄົນໃດລະເມີດລະບຽບການສະບັບນີ້ ຈະຖືກຕັກເຕືອນຈາກຄະນະກຳມະການປະສານງານວຽກງານ ໄອຊີທີ ແລະຖືກບັນທຶກໄວ້ເພື່ອພິຈາລະນາຕໍ່ການຄັດເລືອກຜົນງານຢູ່ໃນກົມກອງຂອງຕົນ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

ມາດຕາ16. <u>ການຈັດຕັ້ງປະຕິບັດ</u>

ມອບໃຫ້ຄະນະກຳມະການປະສານງານວຽກງານ ໄອຊີທີ ຂອງຂະແໜງ ຍທຂ ເປັນເຈົ້າການສົມທົບກັບທຸກພາກສ່ວນ ທີ່ກ່ຽວຂ້ອງຈັດຕັ້ງຜັນຂະຫຍາຍ ແລະປະຕິບັດຕາມຂໍ້ຕົກລົງສະບັບນີ້ໃຫ້ມີປະສິດ ທິຜົນ.

ບັນດາກົມ, ການຈັດຕັ້ງທຽບເທົ່າກົມ, ກອງ, ສະຖາບັນ, ສະພາວິທະຍາສາດ ແລະສູນຝຶກຂອງກະຊວງ ຍທຂ, ບັນດາພະແນກ ຍທຂ ແຂວງ, ແລະນະຄອນຫລວງ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະ ດວກໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

ມາດຕາ17. <u>ຜົນບັງຄັບໃຊ້</u>

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ມື້ລົງລາຍເຊັນນີ້ເປັນຕົ້ນໄປ.

ສັດຖະມົນຕີວ່າການ

ສົມບາດ ພົລເສນາ